ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ ໄຊຍະບູລີ

ເລກທີ 140 /ສພຂ.ຊບ

ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024 ແລະ ທິດທາງແຜນການ ປະຈໍາປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ II

- ອີງຕາມ ກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ກອງປະຊຸມສະໄໝສາມັນ ປະຈໍາປີ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ແຜນວຽກງານຈຸດສຸມ ປະຈໍາປີ 2024 ຂອງຄະນະປະຈໍາສະພາປະຊາຊົນແຂວງໄຊຍະບູລີ ສະບັບເລກທີ 40/ຄປຈ.ຊບ, ລົງວັນທີ 18 ມັງກອນ 2024;
- ອີງຕາມ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024 ແລະ ທິດທາງແຜນການ ປະຈໍາປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ II.

ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ໄດ້ພິຈາລະນາຢ່າງເລິກເຊິ່ງ, ຖີ່ຖ້ວນ ຕໍ່ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024 ແລະ ທິດທາງແຜນການ ປະຈໍາປີ 2025 ຂອງສະພາປະຊາຊົນແຂວງ

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024**

ກອງປະຊຸມສະແດງຄວາມຊົມເຊີຍຕໍ່ການເຄື່ອນໄຫວວຽກງານ ຢ່າງຫ້າວຫັນຂອງສະພາປະຊາຊົນແຂວງ ໃນປີ 2024 ເຫັນດີຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈໍາປີ 2024 ເປັນຕົ້ນຮັບຮອງເອົາການເຂົ້າຮ່ວມຄົ້ນຄວ້າ, ປະກອບຄໍາເຫັນຕໍ່ຮ່າງກົດໝາຍ ທີ່ນໍາເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 7, ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ 2 ຄັ້ງ ຈໍານວນ 22 ສະບັບ; ຜົນການປະເມີນຜົນການຈັດຕັ້ງປະຕິບັດ ລັດຖະທໍາມະນູນ ສະບັບປີ 2015 ໄດ້ 17 ຈຸດ; ພິຈາລະນາ ຕົກລົງບັນຫາສໍາຄັນພື້ນຖານ ຂອງແຂວງ ໂດຍຜ່ານກົນໄກການດໍາເນີນກອງປະຊຸມສະໄໝສາມັນຂອງສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ ອອກເປັນມະຕິ ທັງໝົດ 20 ສະບັບ; ຕິດຕາມກວດກາຫົວຂໍ້ຕ່າງໆ ຈໍານວນ 16 ຄັ້ງ; ພິຈາລະນາ, ແກ້ໄຂຄໍາຮ້ອງຂໍຄວາມເປັນທໍາຂອງປະຊາຊົນ ຈໍານວນ 9 ເລື່ອງ; ສ້າງຄວາມເຂັ້ມແຂງໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ ໄດ້ 27 ຄັ້ງ; ລົງພົບປະ ແລະ ເຜີຍແຜ່ຜົນສໍາເລັດກອງປະຊຸມສະໄໝສາມັນ ເທື່ອທີ 6 ແລະ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໄດ້ ທັງໝົດ 158 ຈຸດ, ໃນນີ້ ສໍານັກງານ, ກົມກອງ 19 ຈຸດ, ບ້ານ 139 ຈຸດ; ມີຜູ້ເຂົ້າຮ່ວມ ທັງໝົດ 24.876 ຄົນ, ຍິງ 11.046 ຄົນ; ເຄື່ອນໄຫວວຽກງານການຕ່າງປະເທດ ຮ່ວມກັບ ບັນດາປະເທດ ເພື່ອນມິດຍຸດທະສາດ ສສ ຫວຽດນາມ, ສປ ຈີນ ໄດ້ 10 ຄັ້ງ.

ຄຽງຄູ່ກັບຜົນສໍາເລັດດັ່ງກ່າວ ກໍຍັງມີບາງດ້ານ ທີ່ສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງ ຈະໄດ້ພ້ອມກັນ ສືບຕໍ່ປັບປຸງແກ້ໄຂໃນຕໍ່ໜ້າ ເປັນຕົ້ນ ການສ້າງ ແລະ ປັບປຸງກົດໝາຍ, ນິຕິກໍາໃຕ້ກົດໝາຍ ຕ້ອງເອົາໃຈໃສ່



Scanned with CamScanner
CamScanner

ກະກຽມແຕ່ຫົວທີ ເພື່ອໃຫ້ ບັນລຸຕາມແຜນການ, ການທາບທາມ, ການໂຄສະນາເຜີຍແຜ່ກົດໝາຍ ຕ້ອງໄດ້ເຮັດໃຫ້ກວ້າງຂວາງທັນເວລາ, ການກະກຽມເນື້ອໃນກອງປະຊຸມສະພາປະຊາຊົນແຂວງ, ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ໃຫ້ຮັບປະກັນຄຸນະພາບ ແລະ ທັນເວລາ, ເອົາໃຈໃສ່ແກ້ໄຂຜົນການຕິດຕາມກວດກາ ໃຫ້ເປັນຮູບປະທຳຫຼາຍຂຶ້ນ, ການຄົ້ນຄວ້າພິຈາລະນາຄຳຮ້ອງຂໍຄວາມ ເປັນທຳ, ການແກ້ໄຂຄຳຮ້ອງ, ຄຳສະເໜີ ແລະ ສາຍດ່ວນຂອງຜູ້ມີສິດເລືອກຕັ້ງ ຕ້ອງວ່ອງໄວ, ຖືກຕ້ອງຕາມລະບຽບກົດໝາຍ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງສະພາປະຊາຊົນແຂວງ**

ກອງປະຊຸມເຫັນດີ ຮັບຮອງເອົາທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ດັ່ງນີ້:

**1. ດ້ານນິຕິກຳ**

1) ສືບຕໍ່ສົມທົບ ກັບ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຄົ້ນຄວ້າ, ປະກອບຄຳເຫັນຕໍ່ຮ່າງກົດໝາຍ 13 ສະບັບ, ໃນນີ້ສ້າງໃໝ່ 8 ສະບັບ, ປັບປຸງ 5 ສະບັບ ຕາມແຜນຂອງສະພາແຫ່ງຊາດ; ຊຸກຍູ້ອົງການປົກຄອງແຂວງສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ ໃຫ້ບັນລຸຕາມເປົ້າໝາຍ 3 ສະບັບຄື: ຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ, ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍກອງທຶນສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ພັດທະນາບໍລິຫານຕົວເມືອງໄຊຍະບູລີ;

2) ລົງເຜີຍແຜ່ກົດໝາຍໃນຂົງເຂດສະພາ ເປັນຕົ້ນແມ່ນ: ກົດໝາຍວ່າດ້ວຍສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ; ກົດໝາຍວ່າດ້ວຍ ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ກົດໝາຍວ່າດ້ວຍ ການແກ້ໄຂຄຳຮ້ອງທຸກ ໃຫ້ໄດ້ 6 ເມືອງ ຄື: ເມືອງຄອບ, ເມືອງຊຽງຮ່ອນ, ເມືອງເງິນ, ເມືອງປາກລາຍ, ເມືອງແກ່ນທ້າວ ແລະ ເມືອງບໍ່ແຕນ; ສືບຕໍ່ຊຸກຍູ້ພາກສ່ວນກ່ຽວຂ້ອງ ໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ທີ່ໄດ້ຮັບຮອງໄປແລ້ວນັ້ນ ໃຫ້ກວ້າງຂວາງແທດເຖິງເປົ້າໝາຍ;

3) ກະກຽມເຂົ້າຮ່ວມສະຫຼຸບການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ 5 ປີ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ;

4) ນຳພາຮ່າງແຜນພັດທະນາວຽກງານສະພາປະຊາຊົນແຂວງ, ແຜນການສ້າງ-ປັບປຸງນິຕິກຳໃຕ້ກົດໝາຍ ຂອງແຂວງ ແລະ ຂອງສະພາປະຊາຊົນແຂວງ ໄລຍະ 5 ປີ(2026-2030);

5) ເອົາໃຈໃສ່ປະສານສົມທົບກັບຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳພັກແຂວງ ກະກຽມຄວາມພ້ອມແຕ່ຫົວທີດ້ານຕ່າງໆ ໃຫ້ແກ່ການດຳເນີນການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ III.

**2. ດ້ານການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ.**

ສະພາປະຊາຊົນແຂວງ ຈະໄດ້ຄົ້ນຄວ້າ, ພິຈາລະນາ ຮັບຮອງເອົາເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນກອງປະຊຸມ ສະໄໝສາມັນ ເທື່ອທີ 9 ເທື່ອທີ 10 ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຊຸດທີ II, ເພີ່ມທະວີການປະສານສົມທົບກັບສະພາແຫ່ງຊາດ ແລະ ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ ເພື່ອຮັບປະກັນການປະຕິບັດ ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ໃນການຕົກລົງບັນຫາສຳຄັນຂອງແຂວງ ໃຫ້ຮັບປະກັນຄຸນນະພາບ ແລະ ປະສິດທິຜົນ.

**3. ດ້ານການຕິດຕາມກວດກາ.**

1) ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ ໃນຂົງເຂດສະພາ, ການປົກຄອງ, ເສດຖະກິດ, ວັດທະນະທຳ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດສານ, ໄອຍະການ ແລະ ຂົງເຂດອື່ນໆ;



Scanned with CamScanner
CamScanner

2) ຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມະຕິກອງປະຊຸມຂອງສະພາປະຊາຊົນແຂວງ ແລະ ຄະນະປະຈຳສະພາປະຊາຊົນແຂວງ ເປັນຕົ້ນ: ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ ທີ່ມີຄວາມຫຍຸ້ງຍາກ, ສິ່ງຜົນກະທົບຕໍ່ການດຳລົງຊີວິດ ຂອງປະຊາຊົນບັນດາເຜົ່າ;

3) ສົມທົບກັບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ຕິດຕາມ, ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດວຽກງານມາດຕະຖານທາງດ້ານສັງຄົມ ແລະ ສິ່ງແວດລ້ອມ ຂອງບັນດາໂຄງການ ລົງທຶນຂະໜາດໃຫຍ່ ຢູ່ແຂວງໄຊຍະບຸລີ;

4) ສົມທົບກັບອົງການແນວລາວສ້າງຊາດແຂວງ, ພະແນກພາຍໃນແຂວງ ລົງຕິດຕາມກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດ ດຳລັດ 315/ລບ ກ່ຽວກັບການຄຸ້ມຄອງວຽກງານເຜົ່າ ແລະ ສາສະໜາ ຢູ່ 4 ເມືອງຄື: ເມືອງໄຊຍະບຸລີ, ເມືອງຄອບ, ເມືອງຊຽງຮ່ອນ ແລະ ເມືອງປາກລາຍ;

5) ຕິດຕາມກວດກາ ຜ່ານກົນໄກ ການຮັບ, ການພິຈາລະນາ, ການແກ້ໄຂຄຳຮ້ອງຂໍຄວາມເປັນທຳ, ຄຳສະເໜີ, ສາຍດ່ວນ; ຕ້ອນຮັບ ແລະ ໃຫ້ຄຳປຶກສາດ້ານກົດໝາຍ ແກ່ປະຊາຊົນ;

6) ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງ ເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໂດຍຜ່ານການລາຍງານ ໃນກອງປະຊຸມສະໄໝສາມັນ, ກອງປະຊຸມຄະນະປະຈຳ, ຄົບຄະນະຂອງບັນດາຄະນະກຳມະການ ແລະ ຕິດຕາມຜ່ານຮູບແບບອື່ນໆ.

**4. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ.**

1) ເຂົ້າຮ່ວມກອງປະຊຸມຝຶກອົບຮົມຫົວຂໍ້ຕ່າງໆ ຕາມແຜນຂອງສະພາແຫ່ງຊາດ; ຂຽນແຜນສະເໜີຂໍ ອຸປະກອນ ແລະ ງົບປະມານຈາກສະພາແຫ່ງຊາດ (ໂຄງການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ Steps) ແລະ ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມໃຫ້ສະມາຊິກສະພາ ປະຊາຊົນແຂວງ, ບຸກຄະລາກອນ ຂອງແຂວງ ແລະ ພະນັກງານຊ່ວຍວຽກ ຂອງສະພາປະຊາຊົນແຂວງ ໃຫ້ໄດ້ 10 ກິດຈະກຳ;

2) ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນວຽກງານຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳ ເຂດເລືອກຕັ້ງເມືອງ ໃຫ້ໄດ້ 1 ຄັ້ງ; ປະສານສົມທົບ ກັບ ສະພາປະຊາຊົນແຂວງໃດໜຶ່ງ ເພື່ອຈັດກອງປະຊຸມ ແລກປ່ຽນບົດຮຽນ ເຊິ່ງກັນ ແລະ ກັນ;

3) ສົມທົບກັບພາກສ່ວນກ່ຽວຂ້ອງ ສ້າງເງື່ອນໄຂ, ຊຸກຍູ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ເພື່ອຍົກລະດັບທາງດ້ານວິຊາສະເພາະ, ທິດສະດີການເມືອງ, ພາສາຕ່າງປະເທດ, ຄວາມຮູ້ ພື້ນຖານດ້ານກົດໝາຍ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ-ຕ່າງປະເທດ ເປັນປົກກະຕິ;

4) ສົມທົບກັບ ຄະນະປະຈຳພັກແຂວງ ຄົ້ນຄວ້າປັບປຸງກົງຈັກ, ສັບຊ້ອນບຸກຄະລາກອນ ເຂົ້າໃນກົງຈັກ ຂອງອົງການປົກຄອງແຂວງ ແລະ ສະພາປະຊາຊົນແຂວງ; ພ້ອມທັງປັບປຸງແບບແຜນວິທີເຮັດວຽກ ທັນເປັນ ທັນສະໄໝ ເທື່ອລະກ້າວ;

5) ເພີ່ມທະວີການປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ແນວລາວ ສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນແຂວງ, ສານ ປະຊາຊົນແຂວງ, ອົງການກວດສອບປະຈຳພາກເໜືອ 1, ອົງການກວດກາລັດແຂວງ ເພື່ອເປັນບ່ອນອີງໃນ ການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນຄຸນນະພາບ, ສາມາດກວດສອບໄດ້ຄວາມ ຖືກຕ້ອງຕາມກົດໝາຍ;

6) ປະສານສົມທົບກັບສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ໃນການສ້າງຕຶກສະພາປະຊາຊົນ ແຂວງ ໂດຍນຳໃຊ້ເງິນເກີນແຜນ ຂອງສູນກາງ ແລະ ທ້ອງຖິ່ນ ເພື່ອສືບຕໍ່ໂຄງການໃຫ້ມີຄວາມຄືບໜ້າ;

7) ສືບຕໍ່ເກັບກຳ, ຄົ້ນຄວ້າ, ຮຽບຮຽງຄືນ ປະຫວັດການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ I ແລະ ຊຸດທີ II;



Scanned with CamScanner
CamScanner

ຄ) ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ກະກຽມຄວາມພ້ອມຮອບດ້ານໃຫ້ແກ່ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ III, ເປັນຕົ້ນແມ່ນການແຕ່ງຕັ້ງ ຄະນະກຳມະການເລືອກຕັ້ງ, ກົນໄກການປະກອບບຸກຄະລາກອນ ແລະ ກົງຈັກການຈັດຕັ້ງ.

**໖. ດ້ານການເຄື່ອນໄຫວ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ**

໑) ຊຸກຍູ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເຄື່ອນໄຫວຕາມພາລະບົດບາດ, ສິດໜ້າທີ່ ເປັນຕົ້ນແມ່ນ: ເຂົ້າຮ່ວມແຕ່ຫົວທີໃນການສ້າງນິຕິກຳ ຂອງອົງການປົກຄອງເມືອງ; ເປັນເສນາທິການໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ຜູ້ມີສິດເລືອກຕັ້ງ, ເກັບກຳຂໍ້ມູນຄຳຮ້ອງທຸກ ທີ່ປ່ອນມາຍັງເຂດເລືອກຕັ້ງຂອງຕົນ ເພື່ອລາຍງານມາຍັງຄະນະປະຈຳສະພາປະຊາຊົນແຂວງ ກັ່ນຕອງ, ພິຈາລະນາ;

2) ປະສານສົມທົບກັບອົງການປົກຄອງເມືອງ, ບ້ານໃນການກະກຽມລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ ໘ ແລະ ເທື່ອທີ ໙ ຂອງສະພາປະຊາຊົນແຂວງ ຊຸດທີ II;

໓) ເອົາໃຈໃສ່ປະສານສົມທົບກັບພາກສ່ວນຕ່າງໆ ກະກຽມວຽກງານຮອບດ້ານ ໃຫ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນແຂວງ ຊຸດທີ III.

໗. ດ້ານການເຄື່ອນໄຫວວຽກງານຕ່າງປະເທດ.

ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ, ລັດ ໃນແຕ່ລະໄລຍະ; ເຂົ້າຮ່ວມ ແລະ ຕ້ອນຮັບການມາຢ້ຽມຢາມ ແລະ ເຮັດວຽກຂອງການນຳຂັ້ນສູງບັນດາປະເທດເພື່ອນມິດຍຸດທະສາດ, ພາກພື້ນ ແລະ ສາກົນ ຕາມການເຊີນຂອງສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ; ເພີ່ມທະວີການຕິດຕາມກວດກາ ຊຸກຍູ້ປະເມີນການຈັດຕັ້ງປະຕິບັດ ບົດບັນທຶກການຮ່ວມມື ລະຫວ່າງ ແຂວງໄຊຍະບູລີ ກັບ ບັນດາແຂວງ ແທງຮວາ, ແຂວງນິງບິ່ງ ຂອງ ສສ ຫວຽດນາມ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ, ຄະນະກຳມະການ, ຄະນະເລຂາທິການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງບິລັນ ຄຳພັນເພັງ



Scanned with CamScanner
CamScanner